ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 9161 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງໂຮງຮຽນສອນຂັບລົດ

- ອີງຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍວິສະຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ ລົງວັນທີ 04 ກັນຍາ 2017;
- ອີງຕາມ ໜັງສືສະເໜີຂອງກົມຂົນສົ່ງ ສະບັບເລກທີ 08280/ຍທຂ.ກຂສ, ລົງວັນທີ 22 ເມສາ 2021.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງໂຮງຮຽນສອນຂັບລົດ ເພື່ອເຮັດໃຫ້ໂຮງຮຽນສອນຂັບລົດໄດ້ມາດຕະຖານ ທັງຮັບປະກັນໃຫ້ແກ່ການຮຽນ-ການສອນ, ການຝຶກອົບຮົມ ປະຕິບັດຖືກຕ້ອງຕາມຫຼັກສູດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແນໃສ່ເຮັດໃຫ້ຜູ້ຂັບຂີ່ ມີ ຄວາມຮູ້ ຄວາມສາມາດອັນແນ່ນອນໃນການຂັບຂີ່ຍານພາຫະນະ, ມີຄວາມຮູ້ພື້ນຖານທາງດ້ານເຕັກນິກກ່ຽວກັບ ຍານພາຫະນະທາງບົກ, ຄວາມຮູ້ກ່ຽວກັບກົດຈາລະຈອນທາງບົກຢ່າງເລິກເຊິ່ງ ແລະ ມີມາລະຍາດ ທີ່ດີໃນການຂັບຂີ່, ປະກອບສ່ວນເຂົ້າໃນການນຳໃຊ້ທາງຫຼວງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພສູງ.

**ມາດຕາ 2 ການຄຸ້ມຄອງໂຮງຮຽນສອນຂັບລົດ**

ການຄຸ້ມຄອງໂຮງຮຽນສອນຂັບລົດ ແມ່ນ ການຄົ້ນຄວ້າ, ພິຈາລະນາ ກ່ຽວກັບການ ອອກໃບອະນຸຍາດສ້າງຕັ້ງ, ເຄື່ອນໄຫວ, ຄວບຄຸມ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການຫຼັກສູດ ກ່ຽວກັບການຮຽນ-ການສອນຂັບລົດ ໃຫ້ຖືກຕ້ອງຕາມ ການອະນຸຍາດ ແລະ ມາດຕະຖານເຕັກນິກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ ແລະ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເດີ່ນຝຶກແອບຕົວຈິງ ທີ່ເປັນແບບສວນຈະລາຈອນ ໝາຍເຖິງ** ສະໜາມຝຶກແອບການຂັບຂີ່ທີ່ມີການກຳນົດໃຫ້ມີທ່າບັງຄັບຕ່າງໆ ແລະ ແຕ່ລະທ່າບັງຄັບຈະມີການກຳນົດມາດຕະຖານຮູບແບບ ແລະ ຂະໜາດ ທີ່ຊັດເຈນ;

2. **ສວນຈະລາຈອນ ໝາຍເຖິງ** ພື້ນທີ່ຝຶກແອບການຂັບຂີ່ທີ່ມີການຈຳລອງເສັ້ນທາງທົ່ວໄປ ອາດຈະລວມເຖິງສວນທີ່ໃຫ້ເດັກນ້ອຍໄດ້ຮຽນຮູ້ການປະຕິບັດກົດຈະລາຈອນ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການສ້າງຕັ້ງໂຮງຮຽນສອນຂັບລົດ**

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ສ້າງຕັ້ງໂຮງຮຽນສອນຂັບລົດ ໃຫ້ຖືກຕ້ອງ ຕາມລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ລັດ ສົ່ງເສີມ ໃຫ້ໂຮງຮຽນສອນຂັບລົດ ນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ແລະ ເໝາະສົມກັບສະພາບຕົວຈິງຂອງພູມີປະເທດໃນແຕ່ລະທ້ອງຖິ່ນ ເຂົ້າໃນການຮຽນ-ການສອນຂັບຂັບຂີ່ລົດ.

ລັດ ສົ່ງເສີມ ແລະ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ສ້າງຕັ້ງໂຮງຮຽນສອນຂັບລົດ ຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ, ເຂດທຸລະກັນດານ ດ້ວຍການໃຫ້ນະໂຍບາຍ ແລະ ວາງລະບຽບການ ຢ່າງເໝາະສົມ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງໂຮງຮຽນສອນຂັບລົດ**

ການຄຸ້ມຄອງໂຮງຮຽນສອນຂັບລົດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

2. ຮັບປະກັນການອະນຸຍາດສ້າງຕັ້ງໂຮງຮຽນ ສອນຂັບລົດທົ່ວໄປ ແລະ ວິຊາຊີບການຂັບຂີ່ ໃຫ້ຖືກຕ້ອງຕາມເງື່ອນໄຂ ແລະ ປະເພດການອະນຸຍາດ;

3. ຮັບປະກັນລະບົບການຮຽນ-ການສອນ ໃຫ້ຖືກຕ້ອງຕາມໂຄງການຫຼັກສູດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ;

4. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

5. ຮັບປະກັນໃຫ້ເດີ່ນຝຶກແອບຕົວຈິງ ທີ່ເປັນແບບສວນຈະລາຈອນ ຖືກຕ້ອງຕາມມາດຕະຖານເຕັກນິກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ.

# ໝວດທີ 2
# ການຂໍອະນຸຍາດສ້າງຕັ້ງ, ເງື່ອນໄຂ ແລະ ມາດຕະຖານ ຂອງໂຮງຮຽນສອນຂັບລົດ

**ມາດຕາ 7 ໂຮງຮຽນສອນຂັບລົດ**

ໂຮງຮຽນສອນຂັບລົດ ມີ ສອງ ປະເພດ ດັ່ງນີ້:

1. ໂຮງຮຽນສອນຂັບລົດທົ່ວໄປ ສໍາລັບສິດສອນການຂັບຂີ່ໃຫ້ຜູ້ຂັບຂີ່ ທີ່ຂັບລົດບໍ່ທັນເປັນ ຫຼື ຂັບເປັນ ແຕ່ບໍ່ທັນມີໃບຂັບຂີ່ ຈໍານວນ 4 ຫຼັກສູດ ຕາມແຕ່ລະຊະນິດຂອງໃບຂັບຂີ່ ຄື: A, A1, A2, A3, B, C ແລະ ພາກບໍາລຸງໜຶ່ງຫຼັກສູດ D;

2. ໂຮງຮຽນສອນຂັບລົດວິຊາຊີບການຂັບຂີ່ ສໍາລັບການສິດສອນນັກຂັບຂີ່ທີ່ປະກອບອາຊີບເປັນນັກຂັບຂີ່ລົດຂົນສົ່ງ ຈໍານວນ 3 ຫຼັກສູດ ຕາມແຕ່ລະຊະນິດຂອງໃບຂັບຂີ່ ຄື: C1, C2, D1, D2, E ແລະ E1.

**ມາດຕາ 8 ການອອກອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ**

ການອອກອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ ໃຫ້ປະຕິບັດ ດັ່ງນີ້:

1. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຄົ້ນຄວ້າ ແລະ ພິຈາລະນາ ອອກໃບອະນຸຍາດໃຫ້ສ້າງຕັ້ງໂຮງຮຽນສອນຂັບລົດທົ່ວໄປ;

2. ກົມຂົນສົ່ງ ຄົ້ນຄວ້າ ແລະ ພິຈາລະນາ ອອກໃບອະນຸຍາດໃຫ້ສ້າງຕັ້ງໂຮງຮຽນສອນຂັບລົດວິຊາຊີບການຂັບຂີ່.

ໃນກໍລະນີທີ່ມີການຄວບກັນທັງສອງປະເພດ ແມ່ນ ກົມຂົນສົ່ງ ຄົ້ນຄວ້າ ແລະ ພິຈາລະນາ ອອກໃບອະນຸຍາດ ສ້າງຕັ້ງໂຮງຮຽນດັ່ງກ່າວ.

ການອະນຸຍາດໃຫ້ສ້າງຕັ້ງໂຮງຮຽນສອນຂັບລົດ ຕ້ອງພິຈາລະນາ ພາຍໃນກໍານົດເວລາ ສາມສິບ ວັນ ນັບແຕ່ວັນໄດ້ຮັບເອກະສານຂໍອະນຸຍາດສ້າງຕັ້ງຢ່າງຄົບຖ້ວນ ເປັນຕົ້ນໄປ.

**ມາດຕາ 9 ເງື່ອນໄຂ ແລະ ມາດຕະຖານ ຂອງໂຮງຮຽນສອນຂັບລົດທົ່ວໄປ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດທົ່ວໄປ ການຂັບຂີ່ ຕ້ອງມີ ເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ມີສະຖານທີ່ ແລະ ເນື້ອທີ່ ທີ່ເໝາະສົມຕາມ ຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ;

2. ມີອາຄານ, ສິ່ງປຸກສ້າງຖາວອນ ທີ່ປະກອບດ້ວຍ ຫ້ອງການ, ຫ້ອງຮຽນ, ຫ້ອງປະຊຸມ, ບ່ອນຕິດຕໍ່ສອບຖາມ, ຫ້ອງພັກຄູ, ຫໍພັກນັກຮຽນ ແລະ ອື່ນໆ;

3. ມີເດີ່ນຝຶກແອບຂັບຂີ່ຕົວຈິງທີ່ເປັນແບບສວນຈະລາຈອນມີທ່າບັງຄັບຄົບຖ້ວນຕາມມາດຕະຖານເຕັກນິກທີ່ກົມຂົນສົ່ງ ກໍານົດ;

4. ມີຍານພາຫະນະຮຽນຂັບ ຢ່າງໜ້ອຍ 6 ຄັນ (ບໍ່ນັບລົດຮັບໃຊ້ບໍລິຫານ) ຊຶ່ງປະກອບດ້ວຍ ລົດຈັກ 2 ຄັນ, ລົດ ເກງ 2 ຄັນ ແລະ ລົດບັນທຸກຂະໜາດນ້ອຍ 1 ຄັນ, ລົດຂົນສົ່ງຜູ້ໂດຍສານຂະໜາດ 15 ບ່ອນນັ່ງ 1 ຄັນ; ທຸກຄັນຕ້ອງມີສະພາບເຕັກນິກດີ ມີອາຍຸການໃຊ້ງານບໍ່ເກີນ ສິບ ປີ.

5. ມີອຸປະກອນ ແລະ ເຄື່ອງມື ກ່ຽວກັບການຮຽນ-ການສອນ ຊຶ່ງປະກອບດ້ວຍ ຫົວລົດຈໍາລອງ (Simulator), ຄອມພິວເຕີ, ເຄື່ອງສາຍສະໄລ່ (LCD Projector), ພ້ອມທັງຄູ່ມືການຮຽນ-ການສອນ, ບົດສອນທີ່ເປັນ ພາວເວີພ້ອຍ (Power point), ມີຮູບພາບກ່ຽວກັບການຂັບຂີ່ ແລະ ການນໍາໃຊ້ລົດ;

6. ມີຄະນະອຳນວຍການທີ່ມີຄວາມຮູ້, ຄວາມສາມາດ ໃນການຄຸ້ມຄອງບໍລິຫານ ແລະ ການດຳເນີນທຸລະກິດ, ພ້ອມທັງມີບຸກຄະລາກອນ ທີ່ເຮັດວຽກຄຸ້ມຄອງບໍລິຫານ ຢ່າງໜ້ອຍ 2 ຄົນ;

7. ມີຄູສອນ ຢ່າງໜ້ອຍ 3 ຄົນ ຊຶ່ງປະກອບດ້ວຍຄູສອນພາກທິດສະດີ 1 ຄົນ ແລະ ສອນການຂັບຂີ່ຕົວຈິງ 2 ຄົນ.

**ມາດຕາ 10 ເງື່ອນໄຂ ແລະ ມາດຕະຖານ ຂອງໂຮງຮຽນສອນຂັບລົດວິຊາຊີບການຂັບຂີ່**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດວິຊາຊີບການຂັບຂີ່ ຕ້ອງມີ ເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ມີສະຖານທີ່ ແລະ ເນື້ອທີ່ ທີ່ເໝາະສົມຕາມ ຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ;

2. ມີອາຄານ, ສິ່ງປຸກສ້າງຖາວອນ ທີ່ປະກອບດ້ວຍ ຫ້ອງການ, ຫ້ອງຮຽນ, ຫ້ອງປະຊຸມ, ບ່ອນຕິດຕໍ່ສອບຖາມ, ຫ້ອງພັກຄູ, ຫໍພັກນັກຮຽນ ແລະ ອື່ນໆ;

3. ມີເດີ່ນຝຶກແອບຂັບຂີ່ຕົວຈິງທີ່ເປັນແບບສວນຈະລາຈອນມີທ່າບັງຄັບຄົບຖ້ວນຕາມມາດຕະຖານເຕັກນິກທີ່ກົມຂົນສົ່ງ ກຳນົດ;

4. ມີຍານພາຫະນະຮຽນຂັບ ຢ່າງໜ້ອຍ 6 ຄັນ (ບໍ່ນັບລົດຮັບໃຊ້ບໍລິຫານ) ຊຶ່ງປະກອບດ້ວຍ ລົດຂົນສົ່ງສິນຄ້າຂະໜາດກາງນໍ້າໜັກລວມ 7.500 ກິໂລກຣາມ (C1) 1 ຄັນ, ລົດຂົນສົ່ງສິນຄ້າຂະໜາດໃຫ່ຍ ນໍ້າໜັກລວມ 15.000 ກິໂລກຣາມ (C2) 1 ຄັນ, ລົດຂົນສົ່ງຜູ້ໂດຍສານຂະໜາດ 35 ບ່ອນນັ່ງ (D1) 1 ຄັນ, ລົດຂົນສົ່ງຜູ້ໂດຍສານຂະໜາດ 36 ບ່ອນນັ່ງຂຶ້ນໄປ (D2) 1 ຄັນ, ລົດພ່ວງ (E) 1 ຄັນ ແລະ ລົດຫົວລາກ (E1) 1 ຄັນ; ທຸກຄັນຕ້ອງມີສະພາບເຕັກນິກດີ ມີອາຍຸການໃຊ້ງານບໍ່ເກີນ ສິບ ປີ

5. ມີອຸປະກອນ ແລະ ເຄື່ອງມື ກ່ຽວກັບການຮຽນ-ການສອນ ຊຶ່ງປະກອບດ້ວຍ ຫົວລົດຈຳລອງ (Simulator), ຄອມພິວເຕີ, ເຄື່ອງສາຍສະໄລ່ (LCD Projector), ພ້ອມທັງຄູ່ມືການຮຽນ-ການສອນ, ບົດສອນທີ່ເປັນ ພາວເວີພ້ອຍ (Power point), ມີຮູບພາບກ່ຽວກັບການຂັບຂີ່ ແລະ ການນຳໃຊ້ລົດ;

6. ມີຄະນະອຳນວຍການທີ່ມີຄວາມຮູ້, ຄວາມສາມາດ ໃນການຄຸ້ມຄອງບໍລິຫານ ແລະ ການດຳເນີນທຸລະກິດ, ພ້ອມທັງມີບຸກຄະລາກອນ ທີ່ເຮັດວຽກຄຸ້ມຄອງບໍລິຫານ ຢ່າງໜ້ອຍ 3 ຄົນ;

7. ມີຄູສອນ ຢ່າງໜ້ອຍ 6 ຄົນ ຊຶ່ງປະກອບດ້ວຍຄູສອນພາກທິດສະດີ 2 ຄົນ ແລະ ສອນການຂັບຂີ່ຕົວຈິງ 4 ຄົນ.

ໂຮງຮຽນສອນວິຊາຊີບການຂັບຂີ່ ສາມາດດຳເນີນທຸລະກິດກ່ຽວກັບການສອນຂັບຂີ່ລົດທົ່ວໄປ ແຕ່ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ເພີ່ມຕາມ ຂໍ້ 4 ຂອງມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 11 ການປະກອບເອກະສານຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງໂຮງຮຽນສອນຂັບລົດ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງ ຕໍ່ ກົມຂົນສົ່ງ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຕາມປະເພດຂອງການອະນຸຍາດສ້າງຕັ້ງ ຕາມທີ່ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍສ້າງຕັ້ງໂຮງຮຽນ;

2. ໃບຢັ້ງຢືນທີ່ຢູ່ ສຳລັບຄົນລາວ;

3. ບັດປະຈຳຕົວສຳລັບ ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ກະຊວງ ປ້ອງກັນຄວາມສະຫງົບອອກໃຫ້;

4. ໃບອະນຸຍາດລົງທຶນ ຈາກຄະນະກຳມະການຄຸ້ມຄອງການລົງທຶນ ແລະ ໜັງສືຜ່ານແດນ ສຳລັບຄົນຕ່າງປະເທດ;

5. ໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ນຳໃຊ້ສະຖານທີ່ໂຮງຮຽນ ແລະ ຍານພາຫະນະ;

6. ສຳເນົາເອກະສານຢັ້ງຢືນ ກ່ຽວກັບການໄດ້ຮັບສິດນຳໃຊ້ທີ່ດິນ ທີ່ຖືກຕ້ອງຕາມກົດໝາຍ;

7. ແຜນຜັງທີ່ຕັ້ງ ແລະ ຮູບຖ່າຍຂອງສະຖານທີ່ປຸກສ້າງໂຮງຮຽນສອນຂັບລົດ;

8. ແບບແຜນຜັງຂອງໂຮງຮຽນ, ອາຄານ, ເດີ່ນຝຶກແອບ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;

9. ໃບທະບຽນວິສາຫະກິດ;

10. ບົດວິພາກເສດຖະກິດ-ເຕັກນິກ;

11. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງດ້ານສັງຄົມ ແລະ ທຳມະຊາດ;

12. ຮູບຖ່າຍຂະໜາດ 3x4 ຂອງຜູ້ອຳນວຍການ ຈຳນວນ 4 ໃບ.

**ມາດຕາ 12 ອາຍຸຂອງໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດໂຮງຮຽນສອນຂັບລົດ ມີອາຍຸການນຳໃຊ້ໄດ້ ສິບສອງ ເດືອນ ນັບແຕ່ວັນອອກອະນຸຍາດເປັນຕົ້ນໄປ. ຖ້າວ່າຜູ້ດຳເນີນທຸລະກິດໂຮງຮຽນສອນຂັບລົດ ຫາກຍັງຕ້ອງການສືບຕໍ່ດຳເນີນທຸລະກິດດັ່ງກ່າວ ຕ້ອງໄດ້ຍື່ນຄຳຮ້ອງຂໍສືບຕໍ່ລ່ວງໜ້າ ຢ່າງໜ້ອຍ ສາມສິບ ວັນ ກ່ອນວັນໝົດອາຍຸ, ໃນໄລຍະລໍຖ້າການອະນຸຍາດ ໂຮງຮຽນດັ່ງກ່າວ ສາມາດເຄື່ອນໄຫວ ຢ່າງເປັນປົກກະຕິ.

## ໝວດທີ 3
## ຫຼັກສູດການຮຽນ-ການສອນ

**ມາດຕາ 13 ຫຼັກສູດການຮຽນ-ການສອນ**

ຫຼັກສູດການຮຽນ-ການສອນຂັບລົດ ປະກອບດ້ວຍ ເຈັດ ຫຼັກສູດ ດັ່ງນີ້:

1. A ລົດຈັກສອງລໍ້ຄວາມແຮງບໍ່ເກີນ 125 cc; A1 ລົດຈັກສອງລໍ້ຄວາມແຮງແຕ່ 125 cc ຂຶ້ນໄປ; A2 ລົດຈັກສາມລໍ້ສ່ວນຕົວ ແລະ ລົດສອງລໍ້, ສາມລໍ້ໂດຍສານ ແລະ A3 ລົດໄຖນາທີ່ແກ່ລໍ້, ລົດຕໍ່ອກໆ;

2. B ລົດເບົານ້ຳໜັກລວມຕ່ຳກວ່າ 3.500 ກິໂລກຣາມ, ບໍ່ເກີນ ເກົ້າ ບ່ອນນັ່ງ ລວມທັງຜູ້ຂັບຂີ່;

3. C ລົດບັນທຸກສິນຄ້ານ້ຳໜັກລວມແຕ່ 3.500 ຫາ 7.500 ກິໂລກຣາມ;

4. C1 ລົດຂົນສົ່ງສິນຄ້ານ້ຳໜັກລວມເກີນກວ່າ 7.500 ຫາ 15.000 ກິໂລກຣາມ; C2 ລົດຂົນສົ່ງສິນຄ້ານ້ຳໜັກລວມເກີນກວ່າ 15.000 ກິໂລກຣາມ;

5. D ລົດຂົນສົ່ງໂດຍສານປະເພດ 4 ລໍ້ ຂຶ້ນໄປ, ບໍ່ເກີນ ສິບຫ້າ ບ່ອນນັ່ງ;

6. D1 ລົດຂົນສົ່ງໂດຍສານແຕ່ ສິບຫົກ ຫາ ສາມສິບຫ້າ ບ່ອນນັ່ງ; D2 ລົດຂົນສົ່ງໂດຍສານແຕ່ ສາມສິບຫົກ ບ່ອນນັ່ງ ຂຶ້ນໄປ;

7. E ລົດເບົາ (B), ລົດຂົນສົ່ງສິນຄ້າ (C) ແລະ ລົດຂົນສົ່ງໂດຍສານ (D) ທີ່ແກ່ຫາງລາກນ້ຳໜັກລວມບໍ່ເກີນ 750 ກິໂລກຣາມ; E1 ລົດຂົນສົ່ງສິນຄ້າ C2 ແກ່ຫາງລາກນ້ຳໜັກລວມເກີນກວ່າ 750 ກິໂລກຣາມ.

**ມາດຕາ 14 ການຮຽນ-ການສອນຢູ່ໂຮງຮຽນສອນຂັບລົດ**

ການຮຽນ-ການສອນຢູ່ໂຮງຮຽນສອນຂັບລົດ ແບ່ງເປັນ ສອງ ພາກ ດັ່ງນີ້:

1. ພາກທິດສະດີ;

2. ພາກປະຕິບັດຕົວຈິງ.

ໂຮງຮຽນສອນຂັບລົດ ຕ້ອງສິດສອນຕາມໂຄງການຫຼັກສູດ ແລະ ຕາຕະລາງທີ່ວາງອອກ, ນັກຮຽນຕ້ອງຮຽນຕາມຫຼັກສູດຂອງແຕ່ລະວິຊາຮຽນ ແລະ ກຳນົດເວລາ ຢ່າງຄົບຖ້ວນ ຕາມທີ່ກຳນົດໄວ້ໃນຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງຮຽນສອນຂັບລົດ.

**ມາດຕາ 15 ການສອບເສັງເອົາໃບຂັບຂີ່ຍານພາຫະນະ**

ນັກຮຽນທີ່ໄດ້ຜ່ານຫຼັກສູດການຮຽນ-ການສອນ ທັງ ພາກທິດສະດີ ແລະ ພາກປະຕິບັດຕົວຈິງ ຢ່າງຄົບຖ້ວນ ໂດຍໄດ້ຮັບການຢັ້ງຢືນການຮຽນ ແລະ ການຝຶກອົບຮົມຈາກໂຮງຮຽນແລ້ວ ຫຼື ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຈຶ່ງສາມາດປະກອບເອກະສານຂໍສອບເສັງເອົາໃບຂັບຂີ່ຍານພາຫະນະ ທີ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ຫຼື ຢູ່ໂຮງຮຽນສອນຂັບລົດເອງ ຈັດຂຶ້ນ.

ໂຮງຮຽນໃດທີ່ມີເງື່ອນໄຂຄົບຖ້ວນ ແລະ ມີນັກຮຽນແຕ່ລະຊຸດຮຽນ ສາມາດສະເໜີໃຫ້ໜ່ວຍງານສອບເສັງໃບຂັບຂີ່ຍານພາຫະນະ ຈັດຕັ້ງການສອບເສັງຢູ່ກັບໂຮງຮຽນໄດ້.

## ໝວດທີ 4
## ສິດ ແລະ ພັນທະ ຂອງໂຮງຮຽນສອນຂັບລົດ

**ມາດຕາ 16 ສິດຂອງໂຮງຮຽນສອນຂັບລົດ**

ໂຮງຮຽນສອນຂັບລົດ ມີສິດ ດັ່ງນີ້:

1. ເກັບເງິນຄ່າການຮຽນ-ການສອນຂັບລົດ ນຳນັກຮຽນ;
2. ຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງໂຮງຮຽນສອນຂັບລົດ ບົນພື້ນຖານນະໂຍບາຍ, ກົດໝາຍ ແລະ ລະບຽບການ;
3. ໂຄສະນາເຜີຍແຜ່ລະບຽບການຮຽນ-ການສອນ ແລະ ຂໍ້ມູນ ຂອງໂຮງຮຽນສອນຂັບລົດ;
4. ອອກໃບຢັ້ງຢືນການຮຽນ ແລະ ການຝຶກອົບຮົມ ຂັບລົດໃຫ້ນັກຮຽນ;
5. ບຳລຸງ ແລະ ຍົກລະດັບໃຫ້ຄູສອນຂັບລົດ ຢ່າງເປັນປົກກະຕິ;
6. ບໍລິການດ້ານການສອນຂັບລົດໃຫ້ແກ່ສັງຄົມຢ່າງມີປະສິດທິຜົນ;
7. ຮັບຂໍ້ມູນຂ່າວສານ ແລະ ນະໂຍບາຍຕ່າງໆ ກ່ຽວກັບ ວິຊາຊີບສອນຂັບລົດ;
8. ສະເໜີສ້າງ ແລະ ປັບປຸງ ໂຄງການຫຼັກສູດສອນຂັບລົດໃຫ້ສອດຄ່ອງກັບສະພາບຄວາມຮຽກຮ້ອງຕ້ອງການ ໃນແຕ່ລະໄລຍະ;
9. ຄຸ້ມຄອງ, ຕິດຕາມ ກວດກາ, ບູລະນະຮັກສາ ແລະ ສ້ອມແປງ ເດີ່ນຝຶກແອບຕົວຈິງ ທີ່ເປັນແບບສວນຈະລາຈອນ ເພື່ອຮັບປະກັນໃຫ້ຢູ່ໃນສະພາບດີຢູ່ຕະຫຼອດເວລາ;
10. ຕິດຕາມ ກວດກາ, ຕີລາຄາ, ວັດຜົນ ແລະ ປະເມີນຜົນກ່ຽວກັບການຮຽນການສອນ, ການຝຶກອົບຮົມຢ່າງເປັນປະຈຳ;
11. ນຳໃຊ້ ອຸປະກອນ ແລະ ເຄື່ອງມືກ່ຽວກັບ ການຮຽນ-ການສອນ ທີ່ທັນສະໄໝ;
12. ເກັບກຳຂໍ້ມູນສະຖິຕິຂອງນັກຮຽນທີ່ເຂົ້າຮຽນຂັບລົດ;
13. ປະຕິບັດສິດ ອື່ນຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 17 ພັນທະຂອງໂຮງຮຽນສອນຂັບລົດ**

ໂຮງຮຽນສອນຂັບລົດ ມີພັນທະ ດັ່ງນີ້:

1. ປະຕິບັດກົດລະບຽບຂອງໂຮງຮຽນສອນຂັບລົດ ຢ່າງເຂັ້ມງວດ;

2. ນັບຖື ແລະ ປົກປ້ອງ ຜົນປະໂຫຍດອັນຊອບທຳຂອງນັກຮຽນຂັບລົດ;

3. ປົກປັກຮັກສາ ວັດຖຸປະກອນ, ສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມ ຂອງໂຮງຮຽນ;

4. ສິດສອນຕາມໂຄງການຫຼັກສູດທີ່ກຳນົດໄວ້;

5. ຈັດຕັ້ງການຮຽນ-ການສອນຂັບລົດ ຕາມເງື່ອນໄຂ, ມາດຕະຖານ ແລະ ປະເພດ ທີ່ໄດ້ຮັບອະນຸຍາດ;

6. ສະໜອງສະຖິຕິນັກຮຽນຂັບລົດໃຫ້ກົມຂົນສົ່ງ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;

7. ເສຍພາສີ, ອາກອນ ແລະ ພັນທະອື່ນໃຫ້ລັດ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການ;

8. ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການທີ່ກ່ຽວຂ້ອງ;

9. ປັບປຸງ, ຍົກລະດັບທາງດ້ານເຕັກໂນໂລຊີ ກ່ຽວກັບການບໍລິການການຮຽນ-ການສອນ ໃຫ້ທັນສະໄໝຂຶ້ນເລື້ອຍໆ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ກົມຂົນສົ່ງ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 18 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການຮຽນ-ການສອນຂັບລົດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການເຄື່ອນໄຫວວຽກງານຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ໂຄສະນາເກີນຄວາມຈິງ, ໃສ່ຮ້າຍປ້າຍສີ ຊຶ່ງສ້າງຄວາມເສຍຫາຍແກ່ ໂຮງຮຽນສອນຂັບລົດ;

4. ທຳລາຍ ໂຄງລ່າງພື້ນຖານ ທາງດ້ານເຕັກນິກ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ຂອງໂຮງຮຽນສອນຂັບລົດ;

5. ທຸດຈະລິດ ໃນການຈັດຕັ້ງການຮຽນ-ການສອນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການທົດສອບ;

6. ເຄື່ອນໄຫວທີ່ເປັນການແຕະຕ້ອງເຖິງກຽດສັກສີ ຫຼື ບິດບາດຂອງຄູອາຈານ ແລະ ໂຮງຮຽນ;

7. ປະພຶດໃນສິ່ງທີ່ບໍ່ຖືກຕ້ອງຕາມຮີດຄອງປະເພນີ ພ້ອມທັງ ເຜີຍແຜ່ສິ່ງລາມົກ ອະນາຈານ ທີ່ຂັດກັບຮີດຄອງປະເພນີອັນດີງາມຂອງຊາດ ພາຍໃນໂຮງຮຽນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 19 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ອອກອະນຸຍາດສ້າງຕັ້ງໂຮງຮຽນສອນຂັບລົດ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
2. ກົດໜ່ວງທ່ວງດຶງ, ບໍ່ປະຕິບັດສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຫຼື ເມີນເສີຍຕໍ່ການກະທໍາທີ່ບໍ່ຖືກຕ້ອງ ກ່ຽວກັບເອກະສານສະເໜີຂໍສ້າງຕັ້ງໂຮງຮຽນສອນຂັບລົດ;
3. ຈັດການຝຶກອົບຮົມ ແລະ ດໍາເນີນການສອບເສັງ ຊະນິດໃບຂັບຂີ່ B, C, D, C1, C2, D1, D2, E, E1;
4. ສົມຮູ້ຮ່ວມຄິດກັບ ໂຮງຮຽນສອນຂັບລົດ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ ໂດຍບໍ່ຊອບທໍາ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 20 ຂໍ້ຫ້າມສໍາລັບຜູ້ບໍລິຫານໂຮງຮຽນສອນຂັບລົດ**

ຫ້າມຜູ້ບໍລິຫານໂຮງຮຽນສອນຂັບລົດ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນກິດຈະການໂຮງຮຽນສອນຂັບລົດ ໂດຍບໍ່ຖືກຕອ້ງກັບເປົ້າໝາຍທີ່ຕົນໄດ້ຮັບອະນຸຍາດ;
2. ອະນຸຍາດໃຫ້ບຸກຄົນອື່ນ ນໍາໃຊ້, ໃຫ້ເຊົ່າ ຫຼື ໂອນໃບອະນຸຍາດດໍາເນີນທຸລະກິດ;
3. ເກັບອັດຕາຄ່າບໍລິການຮຽນຂັບລົດ ເກີນກ່ວາ ຂະແໜງການໂຍທາທິການ ແລະ ຂົນສົ່ງ ກໍານົດ;
4. ບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບ ຕາມໂຄງການຫຼັກສູດການຮຽນ-ການສອນ;
5. ອອກໃບຢັ້ງຢືນການຮຽນ ແລະ ການຝຶກອົບຮົມ ໃຫ້ບຸກຄົນທີ່ບໍ່ໄດ້ຜ່ານການຮຽນ-ການສອນ ຄົບຖ້ວນຕາມໂຄງການຫຼັກສູດການຮຽນ-ການສອນ;
6. ຢຸດການເຄື່ອນໄຫວທຸລະກິດ ໂດຍບໍ່ແຈ້ງໃຫ້ກົມຂົນສົ່ງ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ຮັບຮູ້;
7. ສະໜອງຂໍ້ມູນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ໃຫ້ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
8. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງທ່ວງດຶງເອກະສານ ກ່ຽວກັບ ວຽກງານການຮຽນ-ການສອນຂັບລົດ;
9. ໃຫ້, ຮັບ, ທວງເອົາ, ຂໍເອົາ ສິນບົນ ຫຼື ສວຍໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ;
10. ພົວພັນກັບສິ່ງເສບຕິດທຸກປະເພດ ຫຼື ຫຼິ້ນການພະນັນທີ່ຕ້ອງຫ້າມພາຍໃນໂຮງຮຽນ;
11. ສ້າງ ກຸ່ມກ້ອນ, ພັກພວກ ແລະ ທ້ອງຖິ່ນ ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນ ພາຍໃນໂຮງຮຽນ;
12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມສໍາລັບຄູສອນຂັບລົດ**

ຫ້າມຄູສອນຂັບລົດ ມີພຶດຕິກໍາ ດັ່ງນີ້:

1. ສິດສອນ ບໍ່ໄປຕາມເນື້ອໃນຂອງໂຄງການຫຼັກສູດ;
2. ເລືອກປະຕິບັດ ຫຼື ລໍາອຽງໃນການປະຕິບັດໜ້າທີ່ຂອງຕົນ;
3. ໃຫ້, ຮັບ, ທວງເອົາ, ຂໍເອົາ ສິນບົນ ຫຼື ສວຍໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ;
4. ໃຊ້ອາຈາຫຍາບຄາຍ, ດ່ານັກຮຽນ, ໃຊ້ຄວາມຮຸນແຮງ, ນາບຂູ່ນັກຮຽນ ແລະ ເພື່ອນຮ່ວມງານ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສຳລັບນັກຮຽນ**

ຫ້າມນັກຮຽນ ມີພຶດຕິກຳ ດັ່ງນີ້:

1. ລະເມີດ ລະບຽບວິໄນຂອງໂຮງຮຽນ;
2. ພົວພັນ ກັບສິ່ງມຶນເມົາ, ສິ່ງລາມົກ, ອະນາຈານ, ສິ່ງເສບຕິດທຸກປະເພດ ແລະ ຫຼິ້ນການພະນັນທີ່ຕ້ອງຫ້າມພາຍໃນໂຮງຮຽນ;
3. ໃຫ້ສິນບົນແກ່ຜູ້ບໍລິຫານ, ນັກວິຊາການ ແລະ ຄູສອນວິຊາຊີບ;
4. ປະພຶດຫຍາບຄາຍ ບໍ່ສຸພາບຕໍ່ຜູ້ບໍລິຫານ, ນັກວິຊາການ ແລະ ຄູສອນວິຊາຊີບ;
5. ສ້າງກຸ່ມກ້ອນ ເພື່ອກໍ່ຄວາມວຸ້ນວາຍພາຍໃນໂຮງຮຽນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ

**ມາດຕາ 23 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ ປະກອບດ້ວຍ:

1. ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງກົມຂົນສົ່ງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ ກົມຂົນສົ່ງ ມີ ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ;
2. ໂຄສະນາເຜີຍແຜ່ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ;
3. ຄົ້ນຄວ້າ ສ້າງ, ປັບປຸງ ແລະ ພັດທະນາໂຄງການຫຼັກສູດ ໃຫ້ມີຄວາມທັນສະໄໝ;
4. ຄົ້ນຄວ້າ, ກຳນົດ ເງື່ອນໄຂ ແລະ ມາດຕະຖານເຕັກນິກລະອຽດ ກ່ຽວກັບ ເດີ່ນຝຶກແອບທີ່ເປັນແບບສອນຈະລາຈອນຂອງໂຮງຮຽນ, ເງື່ອນໄຂ ແລະ ມາດຕະຖານລະອຽດ ຂອງໂຮງຮຽນ;
5. ຄົ້ນຄວ້າ, ກຳນົດ ອັດຕາຄ່າບໍລິການຮຽນຂັບລົດຂອງໂຮງຮຽນ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
6. ຄົ້ນຄວ້າ ແລະ ວາງແຜນ ສຳລັບການຝຶກອົບຮົມໄລຍະສັ້ນ ພ້ອມທັງຈັດຕັ້ງການຝຶກອົບຮົມໃຫ້ແກ່ວິຊາການຂອງທ້ອງຖິ່ນ, ກຳມະການສອບເສັງໃບຂັບຂີ່ ແລະ ຄູສອນໂຮງຮຽນ;
7. ຄົ້ນຄ້ວາເອກະສານ ແລະ ອອກອະນຸຍາດ ສ້າງຕັ້ງໂຮງຮຽນວິຊາຊີບການຂັບຂີ່;
8. ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວຂອງໂຮງຮຽນວິຊາຊີບການຂັບຂີ່ ພ້ອມທັງຊຸກຍູ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ໃນການຕິດຕາມກວດກາໂຮງຮຽນທົ່ວໄປ ຢ່າງເປັນປົກກະຕິ;
9. ສັງລວມສະຖິຕິ ນັກຮຽນ ແລະ ຜູ້ເຂົ້າຝຶກອົບຮົມຂັບລົດ ໃນຂອບເຂດທົ່ວປະເທດ;
10. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຮງຮຽນ;

11. ອອກຄຳແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄຸ້ມຄອງໂຮງຮຽນ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາເຜີຍແຜ່ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໂຮງຮຽນ;
2. ຄົ້ນຄ້ວາເອກະສານ ແລະ ອອກອະນຸຍາດ ສ້າງຕັ້ງໂຮງຮຽນ ທົ່ວໄປ;
3. ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວຂອງໂຮງຮຽນ ພ້ອມທັງປະເມີນຜົນຄຸນນະພາບ ແລະ ປະສິດທິຜົນ ຂອງໂຮງຮຽນ;
4. ຄົ້ນຄວ້າ ແລະ ວາງແຜນ ສຳລັບການຝຶກອົບຮົມໄລຍະສັ້ນ ພ້ອມທັງຈັດຕັ້ງການຝຶກອົບຮົມໃຫ້ແກ່ວິຊາການຂອງທ້ອງຖິ່ນ, ກຳມະການສອບເສັງໃບຂັບຂີ່ ແລະ ຄູສອນຂອງໂຮງຮຽນ;
5. ເກັບກຳສະຖິຕິ ໂຮງຮຽນ, ນັກຮຽນ ແລະ ຜູ້ເຂົ້າຝຶກອົບຮົມຂັບລົດ ໃນແຂວງ, ນະຄອນຫຼວງ ຂອງຕົນ;
6. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຮງຮຽນ;
7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄຸ້ມຄອງໂຮງຮຽນ ໃຫ້ກົມຂົນສົ່ງ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາໂຮງຮຽນສອນຂັບລົດ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາເຜີຍແຜ່ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໂຮງຮຽນ;
2. ຄົ້ນຄວ້າ ແລະ ວາງແຜນ ສຳລັບການຝຶກອົບຮົມໄລຍະສັ້ນ ພ້ອມທັງຈັດຕັ້ງການຮຽນ ຫຼື ຝຶກອົບຮົມ ໃຫ້ນັກຮຽນ ປະເພດລົດຈັກ ສອງ ລໍ້ A, ຄວາມແຮງບໍ່ເກີນ 125 cc;
3. ຈັດຕັ້ງການສອບເສັງເອົາໃບຂັບຂີ່ຍານພາຫະນະ ປະເພດລົດຈັກ ສອງ ລໍ້ A, ຄວາມແຮງບໍ່ເກີນ 125 cc ແລະ A3 ລົດໄຖນາທີ່ແກ່ລໍ້, ລົດຕໍ່ອກາງ;
4. ເກັບກຳສະຖິຕິ ນັກຮຽນ ແລະ ຜູ້ເຂົ້າຝຶກອົບຮົມ ປະເພດລົດຈັກ ສອງ ລໍ້ A, ຄວາມແຮງບໍ່ເກີນ 125 cc ແລະ A3 ລົດໄຖນາທີ່ແກ່ລໍ້, ລົດຕໍ່ອກາງ ໃນ ເມືອງ, ເທດສະບານ, ນະຄອນ;
5. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຮງຮຽນ ປະເພດລົດຈັກ ສອງ ລໍ້ A, ຄວາມແຮງບໍ່ເກີນ 125 cc ແລະ A3 ລົດໄຖນາທີ່ແກ່ລໍ້, ລົດຕໍ່ອກາງໃນ ເມືອງ, ເທດສະບານ, ນະຄອນ ຂອງຕົນ;
6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄຸ້ມຄອງໂຮງຮຽນ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 27 ເນື້ອໃນການກວດກາ

ການກວດກາວຽກງານຄຸ້ມຄອງໂຮງຮຽນສອນຂັບລົດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດລະບຽບການ ກ່ຽວກັບວຽກງານຄຸ້ມຄອງໂຮງຮຽນ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງຮຽນ.

ມາດຕາ 28 ຮູບການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບຮີບດ່ວນ.

ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບຮີບດ່ວນ ຊຶ່ງແມ່ນການກວດກາໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

ມາດຕາ 29 ການຈັດຕັ້ງປະຕິບັດ

ມອບໃຫ້ກົມຂົນສົ່ງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 30 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ກຳນົດກ່ຽວກັບການອະນຸຍາດສ້າງຕັ້ງ ໂຮງຮຽນ ແລະ ດຳເນີນທຸລະກິດສອນຂັບລົດ ສະບັບເລກທີ 2426/ຄຂປກ, ລົງວັນທີ 11/07/2000.

ລັດຖະມົນຕີ

ວຽງສະຫວັດ ສີພັນດອນ